*Souphanouvong University Journal of Multidisciplinary Research and Development*
*2025, Vol. 11, No. 03, 156-163*
*https://doi.org/10.69692/SUJMRD1103156*

# Factors Influencing on Students' Decisions to Study at Luang Prabang Traditional Arts College

**Phoungern PheangKhamsone*, Vilayphone Somsamone, Sangthong Sifongxay**
*Department of Business Administration, Faculty of Economics and Tourism, Souphanouvong University Lao PDR*

*** Correspondence:** Phoungern PheangKhamsone, Master Student, Business Management Program, Department of Business Administration, Faculty of Economic and Tourism, Souphanouvong University, Tel: +8562028735102, E-mail: tsphugonmab4@gmail.com

***Article Info:***
***Submitted: July 30, 2025***
***Revised: August 08, 2025***
***Accepted: August 14, 2025***

**ABSTRACT**

This study aims to Examine the level of factors influencing the decisions of students who chose to study at the College of Traditional Arts; Examine the level of decision-making among students who chose to study at the College of Traditional Arts; and Analyze the factors affecting the decisions of students who chose to study at the College of Traditional Arts. The sample group consisted of 106 students currently enrolled at the College of Traditional Arts. The research instrument was a questionnaire, and data were analyzed using SPSS software, employing frequency, percentage, mean, standard deviation, and multiple regression analysis. The results showed that, overall, the factors influencing students' decisions to study at the College of Traditional Arts were at a high level. These included financial factors, institutional reputation, personal factors, curriculum, atmosphere and environment, and family influence. Regarding the level of decision-making, findings indicated that students' decisions to study at the College of Traditional Arts were also at a high level. Key reasons included affordability of tuition, the potential for academic qualifications to support career advancement and salary growth, and the expectation of receiving social recognition after graduation. Finally, the analysis revealed that financial factors, institutional factors, environmental factors, public relations, and social factors had a statistically significant effect on students' decisions to study at the College of Traditional Arts (at the 0.05 level).

**Keywords:** Factors Influencing, Decision, Students, College of Traditional Fine Arts

## 1. ພາກສະເຫນີ

ການສຶກສາຖືເປັນສ່ວນໜຶ່ງໃນການພັດທະນາຊັບພະຍາກອນມະນຸດຂອງການດຳເນີນຊີວິດມະນຸດປະຊາຊົນສ່ວນໃຫຍ່ໃຫ້ຄວາມສຳຄັນ ແລະໃຫ້ຄວາມສົນໃຈໃນການສຶກສາເປັນຢ່າງຫລາຍທັງໝົດເຖິງລັດຖະບານໄດ້ມີການສົ່ງເສີມ ແລະສະໜັບສະໜູນໃຫ້ປະຊາຊົນທຸກຄົນຫັນມາໃສ່ໃຈໃນເລື່ອງນີ້ເພາະຖືເປັນພື້ນຖານແຫ່ງຄວາມສຳເລັດໃນຊີວິດ ແລະສາມາດນຳມາໃຊ້ໃນການປະກອບອາຊີບເພື່ອລ້ຽງດູຕົນເອງ ແລະຄອບຄົວ. ຊັບພະຍາກອນມະນຸດນັບເປັນປັດໄຈສຳຄັນທີ່ສຸດໃນການພັດທະນາໜ່ວຍງານ ຫລື ອົງກອນ ຕະຫລອດຈົນການພັດທະນາປະເທດຊາດ ແລະລະດັບໂລກຢ່າງບໍ່ມີທີ່ຈົບ ໃນການພັດທະນາດັ່ງກ່າວລ້ວນແລ້ວແຕ່ຕ້ອງໃຊ້ຊັບກອນມະນຸດ ໃນການຂັບເຄື່ອນ ແລະສິ່ງທີ່ສຳຄັນໃນການພັດທະນາຊັບພະຍາກອນມະນຸດນັ້ນ ກໍ່ຄືການສຶກສາ (Education) ເມື່ອການສຶກສາຄືສິ່ງສຳຄັນໃນການພັດທະນາປະເທດຊາດ ມະນຸດຈຶ່ງຕ້ອງພະຍາຍາມຫາຄວາມຮູ້ເພື່ອນຳໄປໃຊ້ໃນການປະກອບອາຊີບເພີ່ມຫລາຍຂຶ້ນ ນອກຈາກນີ້ການສຶກສາ ຍັງສາມາດເປັນຕົວກຳນົດທິດທາງຂອງປະເທດ ເພາະຫາກປະເທດຊາດໃດມີການສົ່ງເສີມການສຶກສາທີ່ຖືກຕາມທິດທາງ ຕະຫລອດຈົນວາງແຜນການຜະລິດຊັບພະຍາກອນມະນຸດທີ່ມີປະສິດທິພາບ ຈຶ່ງເຮັດໃຫ້ປະເທດນັ້ນມີຕົ້ນທຶນທີ່ເປັນຊັບພະຍາກອນມະນຸດທີ່ມີຄຸນພາບໃນການຮ່ວມກັນພັດທະນາປະເທດຊາດໃຫ້ກ້າວໄກ ທັງໝົດໄປເຖິງໜ່ວຍຍ່ອຍລະດັບອົງກອນ ຫາກຄັດເລືອກຊັບພະຍາກອນມະນຸດທີ່ມີຄຸນນະພາບເຂົ້າມາເຮັດວຽກງານ ຈຶ່ງເຮັດໃຫ້ອົງກອນພັດທະນາໄດ້ຢ່າງກ້າວໄກ (Thongchuea & Tummaek, 2017) ການສຶກສາເປັນຂະບວນການ ໜຶ່ງທີ່ມີຄວາມສຳຄັນຕໍ່ການດຳລົງຊີວິດຂອງມະນຸດເປັນການສຶກສາຄວາມຮູ້ທີ່ສືບທອດກັນມາເພື່ອທຳໃຫ້ມະນຸດມີການພັດທະນາທັງດ້ານຮ່າງກາຍ, ຈິດໃຈ ແລະສາມາດດຳລົງຊີວິດຢູ່ໃນສັງຄົມໄດ້ການສຶກສານັ້ນບໍ່ໄດ້ຈຳກັດຢູ່ພຽງການຮຽນຮູ້ໃນຫ້ອງຮຽນ ຫລື ການອ່ານໜັງສືເທົ່ານັ້ນ ແຕ່ທັງໝົດເຖິງການຮຽນຮູ້ຜ່ານການກະທຳ, ການໃຊ້ຊີວິດປະຈຳວັນ ຫລື ການພົບເຫັນເຫດການຕ່າງໆ ອີກຢ່າງການສຶກສາເປັນຂະບວນການທີ່ເກີດຂຶ້ນຕະຫລອດຊີວິດຕັ້ງແຕ່ເກີດຈົນເຖິງສິ້ນອາຍຸໄຂ (Sangsee, 2005) ຫລັງຈາກທີ່ມະນຸດໄດ້ຮັບການສຶກສາແລ້ວກໍ່ຕ້ອງນຳໄປປັບໃຊ້ໃຫ້ຖືກຕ້ອງເໝາະສົມກັບການປ່ຽນແປງຂອງສັງຄົມ, ສິ່ງແວດລ້ອມ, ເສດຖະກິດ, ການເມືອງ ແລະເທັກໂນໂລຊີເພື່ອໃຫ້ເກີດການພັດທະນາຕົນເອງ ອາຊີບ, ສັງຄົມ ແລະປະເທດ.

ວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ ຕັ້ງຢູ່ບ້ານ ຜາໂຄມ, ນະຄອນ ຫຼວງພະບາງ, ແຂວງຫຼວງພະບາງເປັນກອງວິຊາການປະເພດ II ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ, ປະກອບມີ 4 ຂະແໜ

*Copyright © 2025 by the Authors. Published by Souphanouvong University. This is an open access article under the CC BY-NC-ND license (http://creativecommons.org/licenses/by-nc-nd/4.0/).*

ງການ 2 ພາກວິຊາຄື: ຂະ ແໜງບໍລິຫານ-ຈັດຕັ້ງ, ຂະແໜງວິຊາການ, ຂະແໜງທິດສະດີ-ຫ້ອງສະໝຸດ, ຂະແໜງຄຸ້ມຄອງນັກສຶກສາ, ພາກວິຊາຈິດຕະກຳ ແລະພາກວິຊາປະຕິມະກຳ. ໃນນັ້ນມີພະນັກງານທັງໝົດ 26 ທ່ານ, ຍິງ 4 ທ່ານ, ເຊິ່ງວິທະຍາໄລແຫ່ງນີ້ໄດ້ຮັບການອະນຸມັດຈາກລັດຖະມົນຕີ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທຽວ່ ແລະກະຊວງສຶກສາທິການ ແລະ ກິລາເປີດໃນຫຼັກສູດ ຊັ້ນກາງ 3 ປີ (ນັກຮຽນຈົບມໍຕົ້ນ) ແລະຊັ້ນອານຸປະລິນຍາ 3 ປີ (ນັກຮຽນຈົບມໍປາຍ) ໃນ 2 ສາຂາວິຊາຮຽນຄື: ສາຂາວິຊາປະຕິມະກຳ ແລະ ສາຂາ ຈິດຕະກຳ ວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງມີຖານະຂຶ້ນກັບກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ ເຊິ່ງເປັນສະຖານການສຶກສາທີ່ຖືກຍອມຮັບຈາກພາກລັດ ແລະເອກະຊົນວ່າເປັນສູນແຫ່ງຄວາມເປັນເລີດທາງດ້ານວິຊາການນັກສິນລະປິນມີຫຼາຍທ່ານທີ່ໄດ້ກາຍເປັນສິນລະປິນແຫ່ງຊາດ ແລະການພັດທະນາຊັບພະຍາກອນມະນຸດໃຫ້ມີຄວາມຮູ້, ຄວາມສາມາດໃນວິຊາຊີບຕ່າງໆເພື່ອຕອບສະໜອງແຮງງານທີ່ມີຄຸນນະພາບ, ສ້າງຄົນໃຫ້ກາຍເປັນຜູ້ປະກອບອາຊີບ, ນັກພັດທະນາເສດຖະກິດຂອງຊາດ, ໃນສົກສຶກສາ 2019-2021 ທີ່ຜ່ານມາວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ ໄດ້ມີການສຳຫຼວດຜູ້ສຳເລັດການສຶກສາທັງໝົດ 193 ຄົນ, ຍິງ 16 ຄົນເຊິ່ງໄດ້ຊີ້ແຈງໃຫ້ເຫັນວ່າ: ການບັນຈຸເຂົ້າເຮັດວຽກຂອງນັກສຶກສາທີ່ຈົບໄປມີດັ່ງນີ້: ເຮັດວຽກນຳພາກລັດ 8%, ເຮັດວຽກນຳໂຄງການ/ອົງກອນ 12%, ທະຫານ/ຕຳຫຼວດ 3%, ເຮັດວຽກນຳບໍລິສັດ/ທ່ອງທຽວ 14%, ຄ້າຂາຍ 13%, ທຸລະກິດ/ຫັດຖະກຳເປັນຂອງຕົນເອງ 17%,ອາຊີບທົ່ວໄປ 24% ແລະ ໄປຮຽນຕໍ່ໃນລະດັບທີ່ສູງກວ່າ 9% ໂດຍລວມແລ້ວການເຂົ້າເຮັດວຽກນຳພາກລັດແມ່ນມີໜ້ອຍ ແລະການເຮັດວຽກນຳພາກເອກະຊົນ ເຫັນວ່າມີເປີເຊັນຫຼາຍຂຶ້ນອາດເນື່ອງມາຈາກນັກສຶກສາໄດ້ເຂົ້າໃຈກຽ່ວກັບຫຼັກສູດທີ່ໄດ້ເນັ້ນໃສ່ທັກສະໃນການປະກອບອາຊີບດ້ວຍຕົນເອງ ແລະອີງຕາມສະພາບການຂະຫຍາຍຕົວທາງດ້ານເສດຖະກິດສັງຄົມໃນປັດຈຸບັນ (ວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ, 2022).

ດ້ວຍເຫດຜົນດັ່ງກ່າວນີ້, ຜູ້ສຶກສາຈຶ່ງກຳນົດຈຸດປະສົງເພື່ອ: 1) ສຶກສາລະດັບປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ໃນວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ, 2) ສຶກສາລະດັບການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ໃນວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ ແລະ 3) ວິເຄາະປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ໃນວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ.

## 2. ອຸປະກອນ ແລະ ວິທີການ

### 2.1 ປະຊາກອນ ແລະ ກຸ່ມເປົ້າໝາຍ

ປະຊາກອນທີ່ໃຊ້ເຂົ້າໃນການສຶກສາຄັ້ງນີ້ ແມ່ນນັກສຶກສາທີ່ສຶກສາຢູ່ວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ ຈຳນວນ 106 ຄົນ. ເນື່ອງຈາກຂະໜາດຂອງປະຊາກອນ ມີຈຳນວນໜ້ອຍ ຜູ້ສຶກສາ ຈຶ່ງກຳນົດເອົາກຸ່ມເປົ້າໝາຍທີ່ເປັນ ນັກສຶກສາທີ່ສຶກສາຢູ່ວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ ທັງໝົດປະຊາກອນ ເຊິ່ງເທົ່າກັບ 106 ຄົນ.

### 2.2 ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ

ເຄື່ອງມືໃນການເກັບລວບລວມຂໍ້ມູນໂດຍໃຊ້ແບບສອບຖາມ ທີ່ປະກອບດ້ວຍ 3 ພາກສ່ວນ ຄື:

ພາກສ່ວນທີ 1: ຂໍ້ມູນກ່ຽວກັບປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ໃນວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ ປະກອບມີຄື: ປັດໄຈດ້ານບຸກຄົນ, ປັດໄຈດ້ານການເງິນ, ປັດໄຈດ້ານສະຖາບັນການສຶກສາ, ປັດໄຈດ້ານຫຼັກສູດ, ປັດໄຈດ້ານອຸປະກອນ ແລະ ສື່ການຮຽນ-ການສອນ, ປັດໄຈດ້ານອາຈານສອນ, ປັດໄຈດ້ານບັນຍາກາດ ແລະ ສິ່ງແວດລ້ອມ, ປັດໄຈດ້ານການປະຊາສຳພັນ, ປັດໄຈດ້ານຄອບຄົວ ແລະ ປັດໄຈດ້ານສັງຄົມ.

ພາກສ່ວນທີ 2: ຂໍ້ມູນກ່ຽວກັບການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ໃນວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ.

ພາກສ່ວນທີ 3: ຂໍ້ມູນກ່ຽວກັບຄວາມຄິດເຫັນເພີ່ມເຕີມຕໍ່ວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ. ຂໍ້ມູນພາກສ່ວນນີ້ເປັນຂໍ້ມູນຄຳຖາມປາຍປິດ.

◆ ການຫາຄຸນະພາບຂອງແບບສອບຖາມ

1.) ການທົດສອບຄວາມສອດຄ່ອງຕາມເນື້ອໃນແບບສອບຖາມ (Content Validity) ຜູ້ສຶກສາໄດ້ສ້າງແບບສອບຖາມ ໄປຜ່ານຜູ້ຊ່ຽວຊານຈຳນວນ 3 ທ່ານ ເພື່ອພິຈາລະນາຄວາມຖືກຕ້ອງໃຫ້ກົງຕາມເນື້ອໃນ ແລະ ກ່ຽວຂ້ອງກັບຈຸດປະສົງຂອງການສຶກສາ, ໂດຍໃຊ້ວິທີການຫາຄ່າສຳປະສິດຄວາມສອດຄ່ອງ (Index of Item -Objective Congruence: IOC) ຂອງ Srisa-ard (2002) ເຊິ່ງມີເກນໃນການພິຈາລະນາຄ່າ IOC ຕັ້ງແຕ່ 0.50 ຂຶ້ນໄປ ຖືວ່າເໝາະສົມສາມາດນຳໄປໃຊ້ໄດ້. ຜົນການທົດສອບໄດ້ຄ່າສຳປະສິດຄວາມສອດຄ່ອງທັງຫມົດຂອງຄຳຖາມທຸກຂໍ້ ເທົ່າກັບ 0.92 ເຊິ່ງ ສູງກວ່າເກນ ທີ່ກຳນົດໄວ້ ສະແດງວ່າ ແບບສອບຖາມມີຄວາມສອດຄ່ອງສາມາດນຳໄປໃຊ້ເປັນເຄື່ອງມືໃນການເກັບລວບລວມຂໍ້ມູນຕໍ່ໄປໄດ້.

2.) ການທົດສອບຄວາມເຊື່ອໝັ້ນຂອງແບບສອບຖາມ (Reliability) ຜູ້ສຶກສາໄດ້ສ້າງແບບສອບຖາມ ແລ້ວນຳໄປສະ ເໜີຕໍ່ອາຈານນຳພາ ແລະ ຜູ້ຊ່ຽວຊານ ແລ້ວນຳໄປທົດສອບກັບນັກທ່ອງທ່ຽວ ຈຳນວນ 30 ຄົນ ເຊິ່ງບໍ່ແມ່ນກຸ່ມເປົ້າໝາຍ ແລ້ວນຳຂໍ້ມູນທີ່ໄດ້ມາວິເຄາະຫາຄ່າຄວາມເຊື່ອໝັ້ນຂອງເຄື່ອງມື ໂດຍໃຊ້ວິທີການຫາຄ່າສຳປະສິດອານຟາ (Cronbach's Alpha Coefficient: α) ຂອງ Taveerat (1997) ເຊິ່ງມີເກນ 0.80 ຂຶ້ນໄປ ສະແດງວ່າແບບສອບຖາມມີຄວາມເຊື່ອໜ້າຖື ສາມາດນຳໄປໃຊ້ເປັນເຄື່ອງມືໃນການລວບລວມຂໍ້ມູນຕໍ່ໄປໄດ້. ຜົນການທົດສອບໄດ້ຄ່າສຳປະສິດຄວາມເຊື່ອໝັ້ນຂອງຄຳຖາມທຸກຂໍ້ ເທົ່າກັບ 0.95 ເຊິ່ງ ສູງກວ່າເກນທີ່ກຳນົດໄວ້ ສະແດງວ່າ ແບບສອບຖາມ ສາມາດນຳໄປໃຊ້ເປັນເຄື່ອງມືໃນການລວບລວມຂໍ້ມູນຕໍ່ໄປໄດ້.

### 2.3 ວິທີການເກັບກຳຂໍ້ມູນ

ການຄົ້ນຄວ້າວິໄຈໃນຄັ້ງນີ້ຜູ້ສຶກສາໄດ້ໃຊ້ຂໍ້ມູນປະຖົມມະພູມ (Primary Data) ໂດຍໄດ້ມາຈາກແບບສອບຖາມຂອງຕົວຢ່າງ ແລະ ຂໍ້ມູນທຸຕິຍະພູມ (Secondary Data) ແນວຄິດ, ທິດສະດີ, ບົດຄົ້ນຄວ້າວິໄຈທີ່ກ່ຽວຂ້ອງ, ບົດສະຫຼູບ, ບົດລາຍງານ ດັ່ງນີ້:

1) ຂໍ້ມູນປະຖົມພູມ (Primary Data): ແມ່ນຂໍ້ມູນທີ່ໄດ້ມາຈາກແບບສອບຖາມຈາກນັກສຶກສາທີ່ສຶກສາຢູ່ ວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ ໂດຍຂໍ້ມູນປະກອບມີ ຂໍ້ມູນທົ່ວໄປຂອງນັກສຶກສາ, ຂໍ້ມູນກ່ຽວກັບລະດັບປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ໃນ ວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ, ຂໍ້ມູນກ່ຽວກັບລະດັບການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ໃນວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ.

2) ຂໍ້ມູນທຸຕິຍະພູມ (Secondary Data): ແມ່ນຂໍ້ມູນທີ່ໄດ້ມາຈາກແນວຄິດ, ທິດສະດີ, ບົດຄົ້ນຄວ້າທີ່ກ່ຽວຂ້ອງ ແລະ ນິຕິກຳ ໄດ້ແກ່: ແນວຄິດ-ທິດສະດີກ່ຽວກັບການຕັດສິນໃຈ ແລະ ແນວຄິດ-ທິດສະດີກ່ຽວກັບປັດໄຈທີ່ມີອິດທິພົນຕໍ່ການຕັດສິນໃຈ, ບົດສະຫຼຸບປະຈຳສົກສຶກສາ 2024-2025 ແລະ ທິດທາງແຜນການປີ 2025-2026, ແຜນຍຸດທະສາດພັດທະນາການສຶກສາ 5 ປີ (2021-2025) ຂອງກະຊວງສຶກສາ ແລະ ກິລາ.

### 2.4 ການວິເຄາະຂໍ້ມູນ

ການວິເຄາະຂໍ້ມູນກ່ຽວກັບລະດັບປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ໃນວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ, ລະດັບການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ໃນວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ ແລະ ປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈ

ຂອງນັກສຶກສາທີ່ເລືອກຮຽນຕໍ່ໃນວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ. ຜູ້ສຶກສາວິເຄາະຂໍ້ມູນດ້ວຍໂປຣແກຣມການວິເຄາະຂໍ້ມູນທາງສະຖິຕິໃນການວິໄຈທາງສັງຄົມສາດ (SPSS) ເພື່ອວິເຄາະຫາຄວາມຖີ່ (Frequency), ຄ່າສ່ວນຮ້ອຍ (%), ຄ່າສະເລ່ຍ ($\mu$), ຄ່າຜັນປ່ຽນມາດຕະຖານ ($\sigma$) ແລະ ວິເຄາະການຖົດຖອຍພະຫຸຄູນ (Multiple Regression Analysis).

## 3. ຜົນໄດ້ຮັບ

1) ຈາກຕາຕະລາງທີ 1 ພົບວ່າ: ລະດັບປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ໃນວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ ໂດຍລວມແລ້ວແມ່ນຢູ່ໃນລະດັບຫຼາຍ ມີຄ່າ $\mu = 3.85$ ແລະ $\sigma = 0.34$, ເມື່ອພິຈາລະນາໃນລາຍລະອຽດຂອງແຕ່ລະດ້ານພົບວ່າ: ປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ໃນວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ ດ້ານອາຈານສອນ ຢູ່ໃນລະດັບຫຼາຍທີ່ສຸດ ມີຄ່າ $\mu = 4.56$ ແລະ $\sigma = 0.51$, ຮອງລົງມາແມ່ນດ້ານສັງຄົມ ຢູ່ໃນລະດັບຫຼາຍທີ່ສຸດ ມີຄ່າ $\mu = 4.21$ ແລະ $\sigma = 0.60$, ສໍາລັບປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ໃນວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ ດ້ານການເງິນ ຢູ່ໃນລະດັບຫຼາຍ ມີຄ່າ $\mu = 4.14$ ແລະ $\sigma = 0.87$, ຮອງລົງມາແມ່ນດ້ານສະຖາບັນການສຶກສາ ຢູ່ໃນລະດັບຫຼາຍ ມີຄ່າ $\mu = 4.12$ ແລະ $\sigma = 0.50$, ຮອງລົງມາແມ່ນດ້ານບຸກຄົນ ຢູ່ໃນລະດັບຫຼາຍ ມີຄ່າ $\overline{X} = 3.80$, ຮອງລົງມາແມ່ນດ້ານຫຼັກສູດ ຢູ່ໃນລະດັບຫຼາຍ ມີຄ່າ $\mu = 3.72$ ແລະ $\sigma = 0.68$, ຮອງລົງມາແມ່ນດ້ານບັນຍາກາດ-ສິ່ງແວດລ້ອມ ຢູ່ໃນລະດັບຫຼາຍ ມີຄ່າ $\mu = 3.68$ ແລະ $\sigma = 0.51$ ແລະ ຮອງລົງມາແມ່ນດ້ານຄອບຄົວ ຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍເທົ່າກັບ $\mu = 3.65$ ແລະ SD = 0.64 ຕາມລໍາດັບ. ສ່ວນວ່າປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ໃນວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ ດ້ານການປະຊາສໍາພັນ ຢູ່ໃນລະດັບປານກາງ ມີຄ່າ $\mu = 3.32$ ແລະ $\sigma = 0.63$ ແລະ ຮອງລົງມາດ້ານອຸປະກອນ ແລະ ສື່ການຮຽນ-ການສອນ ຢູ່ໃນລະດັບປານກາງ ມີຄ່າ $\mu = 3.27$ ແລະ $\sigma = 0.63$ ຕາມລໍາດັບ.

2) ຈາກຕາຕະລາງທີ 2 ພົບວ່າ ລະດັບການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ໃນວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ ໂດຍລວມແລ້ວແມ່ນຢູ່ໃນລະດັບຫຼາຍ ມີຄ່າ $\mu = 4.13$ ແລະ $\sigma = 0.46$, ເມື່ອພິຈາລະນາໃນລາຍລະອຽດຂອງແຕ່ລະດ້ານພົບວ່າ: ການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ໃນວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ ດ້ານເຮັດໃຫ້ຕົນເອງມີໂອກາດຮຽນຮູ້ ແລະ ມີຄວາມກ້າວໜ້າໃນອາຊີບ ຢູ່ໃນລະດັບຫຼາຍທີ່ສຸດ ມີຄ່າ $\mu = 4.46$ ແລະ $\sigma = 0.65$, ຮອງລົງມາແມ່ນດ້ານສາມາດຄວາມຮູ້ທີ່ໄດ້ຮຽນມາໄປປະກອບອາຊີບອິດສະຫຼະ ຫຼື ອາຊີບເສີມໄດ້ ຢູ່ໃນລະດັບຫຼາຍທີ່ສຸດ ມີຄ່າ $\mu = 4.46$ ແລະ $\sigma = 0.71$, ຮອງລົງມາແມ່ນໄດ້ຄວາມຮູ້ທາງວິຊາການໃໝ່ໆເພີ່ມຂຶ້ນ ແລະ ສາມາດນໍາໄປໃຊ້ໃນການປະຕິບັດງານ ຫຼື ປະກອບອາຊີບໄດ້ ຢູ່ໃນລະດັບຫຼາຍທີ່ສຸດ ມີຄ່າ $\mu = 4.34$ ແລະ $\sigma = 0.63$, ຮອງລົງມາແມ່ນຫຼັກສູດທີ່ເລືອກຮຽນກົງກັບຄວາມສາມາດ ແລະ ຄວາມຖະໜັດຂອງຕົນເອງ ຢູ່ໃນລະດັບຫຼາຍທີ່ສຸດ ມີຄ່າ $\mu = 4.28$ ແລະ $\sigma = 0.74$ ແລະ ຮອງລົງມາແມ່ນໄດ້ຮູ້ຈັກໝູ່ເພື່ອນຫຼາກຫຼາຍອາຊີບ, ຫຼາຍໜ່ວຍງານ ພ້ອມທັງໄດ້ແລກປ່ຽນຄວາມຮູ້ ແລະ ປະສົບການເຊິ່ງກັນ ແລະ ກັນ ຢູ່ໃນລະດັບຫຼາຍທີ່ສຸດ ມີຄ່າ $\mu = 4.25$ ແລະ $\sigma = 0.70$ ຕາມລໍາດັບ. ສໍາລັບການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ໃນວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ ດ້ານຄ່າໃຊ້ຈ່າຍໃນການສຶກສາຢູ່ໃນຂອບເຂດທີ່ຕົນເອງສາມາດເຂົ້າສຶກສາໄດ້ ຢູ່ໃນລະດັບຫຼາຍ ມີຄ່າ $\mu = 4.11$ ແລະ $\sigma = 0.68$, ຮອງລົງມາແມ່ນເມື່ອສໍາເລັດການສຶກສາແລ້ວສາມາດນໍາວຸດທິທາງການສຶກສາໄປໃຊ້ໃນການເລື່ອນຊັ້ນ ແລະ ເລື່ອນເງິນເດືອນ ຢູ່ໃນລະດັບຫຼາຍ ມີຄ່າ $\mu = 4.09$ ແລະ $\sigma = 0.83$ ແລະ ຮອງລົງມາແມ່ນເປັນທີ່ຍອມຮັບຈາກສັງຄົມພາຍຫຼັງສໍາເລັດການສຶກສາ ຢູ່ໃນລະດັບຫຼາຍ ມີຄ່າ $\mu = 3.87$ ແລະ $\sigma = 0.77$ ຕາມລໍາດັບ. ສ່ວນວ່າການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ໃນວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ ດ້ານໄດ້ຮັບການສະໜັບສະໜູນ ຫຼື ທຶນການສຶກສາຈາກພາກສ່ວນທີ່ກ່ຽວຂ້ອງ ຢູ່ໃນລະດັບປານກາງ ມີຄ່າ $\mu = 3.33$ ແລະ $\sigma = 0.78$.

3) ຈາກຕາຕະລາງທີ 3 ພົບວ່າ ປັດໄຈທີ່ມີຜົນຕໍ່ການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ໃນວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ ມີ 6 ປັດໄຈ ໄດ້ແກ່: ປັດໄຈດ້ານການເງິນ ($X_2$) ມີຄ່າ Sig = 0.020, ປັດໄຈດ້ານສະຖາບັນການສຶກສາ ($X_3$) ມີຄ່າ Sig = 0.050), ປັດໄຈດ້ານບັນຍາກາດ ແລະ ສິ່ງແວດລ້ອມ ($X_7$) ມີຄ່າ Sig = 0.041, ປັດໄຈດ້ານການປະຊາສໍາພັນ ($X_8$) ມີຄ່າ Sig = 0.037 ແລະ ປັດໄຈດ້ານສັງຄົມ ($X_{10}$) ມີຄ່າ Sig = 0.014 ເນື່ອງຈາກວ່າຜົນການທົດສອບຄ່າ Sig ມີຄ່ານ້ອຍກວ່າລະດັບຄວາມສໍາຄັນທາງສະຖິຕິ $\alpha = 0.05$ ຫມາຍຄວາມວ່າ ປັດໄຈດ້ານການເງິນ, ປັດໄຈດ້ານສະຖາບັນການສຶກສາ, ປັດໄຈດ້ານບັນຍາກາດ ແລະ ສິ່ງແວດລ້ອມ, ປັດໄຈດ້ານການປະຊາສໍາພັນ ແລະ ປັດໄຈດ້ານສັງຄົມ ມີຜົນຕໍ່ການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ໃນວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ ຢ່າງມີຄວາມສໍາຄັນທາງສະຖິຕິທີ່ລະດັບ 0.05. ສະແດງວ່າປະຕິເສດສົມມຸດຖານຫຼັກ $H_0$ ແລະ ຍອມຮັບສົມມຸດຖານຮອງ $H_1$. ເຊິ່ງຕົວປ່ຽນອິດສະຫຼະທັງ 5 ຕົວຮ່ວມກັນອະທິບາຍການຜັນປ່ຽນຂອງການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ໃນວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງໄດ້ ຄິດເປັນສ່ວນຮ້ອຍ 59.10% ຢ່າງມີຄວາມສໍາຄັນທາງສະຖິຕິທີ່ລະດັບ 0.05. ສະແດງວ່າຜົນການທົດສອບສົມມຸດຕິຖານຈຶ່ງເປັນໄປຕາມສົມຖານທີ່ຕັ້ງໄວ້.

ດັ່ງນັ້ນ, ຜູ້ສຶກສາໄດ້ນໍາຄ່າສໍາປະສິດຂອງຕົວພະຍາກອນມາຂຽນເປັນສົມຜົນຖົດຖອຍພະຫຸຄູນຂອງການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ໃນວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ ໂດຍນໍາໃຊ້ຄະແນນມາດຕະຖານດັ່ງນີ້:

$$Y = 0.410X_2 + 0.222X_3 + 0.230X_7 + 0.147X_8 + 0.293X_{10}$$

## 4. ວິພາກຜົນ

1) ຜົນການສຶກສາ ພົບວ່າ: ລະດັບປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ໃນວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ ໂດຍລວມແລ້ວ ແມ່ນຢູ່ໃນລະດັບຫຼາຍ ເຊິ່ງປະກອບດ້ວຍ ດ້ານການເງິນ, ດ້ານສະຖາບັນການສຶກສາ, ດ້ານບຸກຄົນ, ດ້ານຫຼັກສູດ, ດ້ານບັນຍາກາດ-ສິ່ງແວດລ້ອມ ແລະ ດ້ານຄອບຄົວ ເຊິ່ງມີຄວາມສອດຄ່ອງກັບຜົນການຄົ້ນຄວ້າຂອງ Laomalo (2019) ໄດ້ລະບຸວ່າ: ປັດໄຈທີ່ມີຜົນຕໍ່ການຕັດສິນໃຈເຂົ້າສຶກສາຕໍ່ປະລິນຍາຕີຂອງນັກສຶກສາມະຫາວິທະຍາໄລຂອນແກ່ນ ປະຈໍາປີການສຶກສາ 2019 ໂດຍຜ່ານການຄັດເລືອກດ້ວຍລະບົບ TCAS ຫລາຍທີ່ສຸດຄືກຸ່ມ ປັດໄຈທາງດ້ານສະຖາບັນການສຶກສາມີຄ່າສະເລ່ຍສູງສຸດ, ຮອງລົງມາປັດໄຈດ້ານຫລັກສູດ ແລະ ປັດໄຈທາງດ້ານສັງຄົມ ຕາມລໍາດັບ ເຊິ່ງສະຫລຸບໄດ້ວ່າປັດໄຈທີ່ມີຜົນຕໍ່ການຕັດສິນໃຈເຂົ້າສຶກສາຕໍ່ປະລິນຍາຕີຂອງນັກສຶກສາມະຫາວິທະຍາໄລຂອນແກ່ນ ຄືປັດໄຈທາງດ້ານສະຖາບັນການສຶກສາເປັນປັດໄຈທີ່ມີຜົນຕໍ່ການຕັດສິນໃຈສູງສຸດ ສອດຄ່ອງກັບຜົນການຄົ້ນຄວ້າຂອງ Sriwaurai (2013) ໄດ້ລະບຸວ່າ ປັດໄຈທີ່ມີຜົນຕໍ່ກະບວນການຕັດສິນໃຈສຶກສາຕໍ່ຫລັກສູດບໍລິຫານທຸລະກິດມະຫາບັນດິດ ແມ່ນປັດໄຈດ້ານຫລັກສູດໃນການສຶກສາມີຄວາມສໍາຄັນຢູ່ໃນລະດັບຫລາຍທີ່ສຸດ, ຮອງລົງມາແມ່ນປັດໄຈດ້ານຄວາມຕ້ອງການສ່ວນບຸກຄົນ ແລະ ຮອງລົງມາແມ່ນປັດໄຈດ້ານຄວາມໝັ້ນ ສອດຄ່ອງກັບຜົນການຄົ້ນຄວ້າຂອງ Lertprapaporn (2014) ໄດ້ລະບຸວ່າ ປັດໄຈທີ່ມີຜົນຕໍ່

ການຕັດສິນໃຈຮຽນຕໍ່ໃນລະດັບປະລິນຍາໂທ ສາຂາການບັນຊີ ແມ່ນ ປັດໃຈດ້ານສະຖາບັນການສຶກສາ, ຮອງລົງມາຄືປັດໃຈທາງສັງຄົມ ແລະ ປັດໃຈທາງຄອບຄົວຕາມລຳດັບ ເຊິ່ງສອດຄ່ອງກັບທິດສະດີຂອງ Maslow (1954) ທີ່ກ່າວວ່າ: ແຮງຈູງໃຈດ້ານນີ້ມີຄວາມສັບຊ້ອນຫຼາຍ, ເປັນຄວາມຕ້ອງການທີ່ມີຜົນມາຈາກດ້ານຊີວະວິທະຍາຂອງມະນຸດ ໃນຄວາມຕ້ອງການຢູ່ຮ່ວມກັນກັບຄອບຄົວ, ໝູ່ເພື່ອນໃນໂຮງຮຽນ, ແລະ ເພື່ອນຮ່ວມງານ. ມັນເປັນຄວາມຕ້ອງການສ່ວນບຸກຄົນທີ່ໄດ້ຮັບອິດທິພົນມາຈາກສິ່ງແວດລ້ອມ ແລະ ວັດທະນະທຳ, ເຊິ່ງໃນບາງວັດທະນະທຳ ຫຼື ບາງສັງຄົມຈະມີອິດທິພົນທີ່ເຂັ້ມແຂງ ແລະ ໜຽວ ແໜ້ນຫຼາຍ. ຄວາມແຕກຕ່າງຂອງແຮງຈູງໃຈດ້ານສັງຄົມ ແລະ ແຮງຈູງໃຈດ້ານຮ່າງກາຍຄື: ແຮງຈູງໃຈດ້ານສັງຄົມເກີດຈາກພຶດຕິກຳທີ່ເຂົາສະແດງອອກດ້ວຍຄວາມຕ້ອງການຂອງຕົນເອງຫຼາຍກວ່າຜົນຕອບແທນຈາກວັດຖຸ ແລະ ສິ່ງຂອງ ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງ Phoyen (2007) ປັດໄຈພາຍນອກທີ່ຜູ້ຕອບແບບສອບຖາມໃຫ້ຄວາມສຳຄັນຫຼາຍທີ່ສຸດຄື: ດ້ານເສດຖະກິດ: ຄືຕ້ອງການປະກອບອາຊີບທີ່ມີຄວາມກ້າວໜ້າ. ດ້ານເທັກໂນໂລຢີ: ຜູ້ຕອບແບບສອບຖາມໃຫ້ຄວາມສຳຄັນຕໍ່ປັດໄຈຍ່ອຍຄື: ເທັກໂນໂລຢີຕ່າງໆ ທີ່ກ່ຽວຂ້ອງກັບການສຶກສາມີການພັດທະນາກ້າວໜ້າຫຼາຍຂຶ້ນ. ດ້ານສັງຄົມ ແລະ ວັດທະນະທຳ: ຜູ້ຕອບແບບສອບຖາມໃຫ້ຄວາມສຳຄັນສູງສຸດຕໍ່ປັດໄຈຍ່ອຍຄື: ຜູ້ຈົບການສຶກສາລະດັບປະລິນຍາຕີຈະມີບົດບາດເປັນທີ່ຍອມຮັບໃນສັງຄົມ. ດ້ານບຸກຄົນ: ຜູ້ຕອບແບບສອບຖາມໃຫ້ຄວາມສຳຄັນຕໍ່ປັດໄຈຍ່ອຍຄື: ຕ້ອງການເຂົ້າຮຽນໃນສະຖານສຶກສາທີ່ມີໂອກາດສຳເລັດການສຶກສາສູງ.

2) ຜົນການສຶກສາ ພົບວ່າ: ລະດັບການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ໃນວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ ພົບວ່າ: ໂດຍລວມແລ້ວແມ່ນຢູ່ໃນລະດັບຫຼາຍ ເຊິ່ງປະກອບມີ ດ້ານຄ່າໃຊ້ຈ່າຍໃນການສຶກສາຢູ່ໃນຂອບເຂດທີ່ຕົນເອງສາມາດເຂົ້າສຶກສາໄດ້, ເມື່ອສຳເລັດການສຶກສາແລ້ວສາມາດນຳວຸດທິທາງການສຶກສາໄປໃຊ້ໃນການເລື່ອນຊັ້ນ ແລະ ເລື່ອນເງິນເດືອນ ແລະ ເປັນທີ່ຍອມຮັບຈາກສັງຄົມພາຍຫຼັງສຳເລັດການສຶກສາ ສອດຄ່ອງກັບຜົນການຄົ້ນຄວ້າຂອງ Laomalo (2019) ໄດ້ລະບຸວ່າ: ການຕັດສິນໃຈເຂົ້າສຶກສາຕໍ່ລະດັບປະລິນຍາຕີຂອງນັກສຶກສາມະຫາວິທະຍາໄລຂອນແກ່ນ ປະຈຳປີການສຶກສາ 2019 ແມ່ນຢູ່ໃນລະດັບຫຼາຍ ເນື່ອງຈາກວ່າເປັນມະຫາວິທະຍາໄລທີ່ມີຄຸນນະພາບ ແລະເປັນມະຫາວິທະຍາໄລລຳດັບຕົ້ນໆຂອງປະເທດອີກດ້ວຍ ແລະ ສັງຄົມຍ້ອງຍໍໃນຄວາມຮູ້ຄວາມສາມາດກໍ່ຈະໄດ້ຮັບການຍອມຮັບຈາກສັງຄົມວ່າຖ້າໄດ້ຮຽນທີ່ມະຫາວິທະຍາໄລຂອນແກ່ນຈະເປັນຄົນທີ່ສັງຄົມຍ້ອງຍໍໃນຄວາມຮູ້, ຄວາມສາມາດ, ມີກຽດຕິຍົດຊື່ສຽງ ແລະສາມາດນຳວິຊາຊີບໄປຫາປະກອບອາຊີບໄດ້ງ່າຍ ສອດຄ່ອງກັບຜົນການຄົ້ນຄວ້າຂອງ Wichitakul (2011) ໄດ້ລະບຸວ່າ ການຕັດສິນໃຈເຂົ້າສຶກສາຕໍ່ ຄະນະວິສະວະກຳສາດ ມະຫາວິທະຍາໄລເທັກໂນໂລຊີຣາດມົງຄົນທັນບຸລີ ແມ່ນຢູ່ໃນລະຫຼາຍ ເຊິ່ງປະກອບມີ ດ້ານຄ່າໃຊ້ຈ່າຍໃນການສຶກສາຢູ່ໃນຂອບເຂດທີ່ຕົນເອງສາມາດເຂົ້າສຶກສາໄດ້, ເມື່ອສຳເລັດການສຶກສາແລ້ວສາມາດນຳວຸດທິທາງການສຶກສາໄປໃຊ້ໃນການເລື່ອນຊັ້ນ ແລະ ເລື່ອນເງິນເດືອນ ແລະ ເປັນທີ່ຍອມຮັບຈາກສັງຄົມພາຍຫຼັງສຳເລັດການສຶກສາ. ສ່ວນດ້ານເຮັດໃຫ້ຕົນເອງມີໂອກາດຮຽນຮູ້ ແລະ ມີຄວາມກ້າວໜ້າໃນອາຊີບ, ສາມາດຄວາມຮູ້ທີ່ໄດ້ຮຽນມາໄປປະກອບອາຊີບອິດສະຫຼະ ຫຼື ອາຊີບເສີມໄດ້, ໄດ້ຄວາມຮູ້ທາງວິຊາການໃໝ່ໆເພີ່ມຂຶ້ນ ແລະ ສາມາດນຳໄປໃຊ້ໃນການປະຕິບັດງານ ຫຼື ປະກອບອາຊີບໄດ້, ຫຼັກສູດທີ່ເລືອກຮຽນກົງກັບຄວາມສາມາດ ແລະ ຄວາມຖະໜັດຂອງຕົນເອງ ແລະ ໄດ້ຮູ້ຈັກໝູ່ເພື່ອນຫຼາກຫຼາຍອາຊີບ, ຫຼາຍໜ່ວຍງານ ພ້ອມທັງໄດ້ແລກປ່ຽນຄວາມຮູ້ ແລະ ປະສົບການ ເຊິ່ງກັນ ແລະ ກັນ ຢູ່ໃນລະດັບຫຼາຍທີ່ສຸດ ສອດຄ່ອງກັບຜົນການຄົ້ນຄວ້າຂອງ Nongrayom (2020) ໄດ້ລະບຸວ່າ ການຕັດສິນໃຈສຶກສາຕໍ່ລະດັບປະລິນຍາຕີຂອງນັກສຶກສາຄະນະເທັກໂນໂລຊີສັງຄົມ ມະຫາວິທະຍາໄລກາລາສິນ ຢູ່ໃນລະດັບຫຼາຍ ແມ່ນ 1) ດ້ານເປົ້າໝາຍ ຄື ຄະນະອາຈານທີ່ມີຄວາມຮູ້ປະສົບການໃນວິຊາສະເພາະສາຂາວິຊານັ້ນໆ ສາມາດໃຫ້ໂອກາດແນວທາງແກ່ນັກສຶກສາໄດ້ເນັ້ນພັດທະນາໃຫ້ນັກສຶກສາມີອາຊີບວຽກງານທີ່ໝັ້ນຄົງ ໂດຍໃຫ້ຄວາມສຳຄັນກັບຄອບຄົວຂອງນັກສຶກສາເປັນສຳຄັນຕະຫຼອດຈົນສ້າງແຮງຈູງໃຈໃນການພັດທະນາຕົນເອງເບິ່ງຫາໂອກາດໃນການຫາວຽກງານ 2) ດ້ານຄວາມເຊື່ອ ແລະຄ່ານິຍົມ ຄື ຜົນງານ ຫລືການນຳສະເໜີຄວາມເຄື່ອນໄຫວຂອງການຮຽນ-ການສອນໃຫ້ເປັນທີ່ຮູ້ຈັກ ແລະຍອມຮັບໃນສັງຄົມ ອາຈານຄວນລົງໄປແນະນຳໃຫ້ຄວາມຮູ້ກ່ຽວກັບການສຶກສາຕໍ່ 3) ດ້ານຄວາມຄາດຫວັງ ຄື ຄວນສ້າງປະສົບການ ຄວາມຮູ້ ແລະໂອກາດໃໝ່ໃນການຮຽນຮູ້ ຮ່ວມລົງມືປະຕິບັດຈາກໃນຊັ້ນຮຽນ ແລະນອກສະຖານທີ່ 4) ດ້ານຄວາມຮູ້ຄວາມສາມາດ ຄື ຄວນສ້າງເສີມປະສົບການ ແລະການຝຶກປະຕິບັດຈົນຊຳນານເກີດທັກສະທີ່ມາຈາກອີງຄວາມຮູ້ທາງວິຊາຊີບທີ່ຖືກຕ້ອງ ສາມາດຄິດວິເຄາະເອງໄດ້ ແລະ 5) ດ້ານອິດທິພົນຈາກສັງຄົມ ຄື ຄວນເບິ່ງປະໂຫຍດທັງທີ່ມີຕໍ່ຕົນເອງ ຄອບຄົວ ແລະສັງຄົມ ສ້າງຄວາມເຊື່ອໝັ້ນໃຫ້ເກີດຂຶ້ນແກ່ຄົນຮອບຂ້າງໃຫ້ໄດ້ໂດຍຄິດເປັນ ເຮັດເປັນ ພັດທະນາເປັນ ສ້າງງານສ້າງອາຊີບໄດ້. ສອດຄ່ອງກັບຜົນການຄົ້ນຄວ້າຂອງ Phaignavong (2020) ການຕັດສິນໃຈເລືອກເຂົ້າສຶກສາຕໍ່ທີ່ມະຫາວິ ທະຍາໄລ ສຸພານຸວົງທັງ 5 ອົງປະກອບມີນ້ຳໜັກໂດຍລຽງລຳດັບ ຈາກຫຼາຍໄປຫາໜ້ອຍທີ່ມີໄລຍະສຳຄັນທາງສະຖິຕິຄື: ປັດໄຈດ້ານຄວາມສາມາດສ່ວນບຸກຄົນ, ປັດໄຈດ້ານ ສະພາບຂອງມະຫາວິທະຍໄລ, ປັດໄຈດ້ານຄວາມຄາດ ຫວັງຂອງຜູ້ປົກຄອງ, ປັດໄຈດ້ານລະບົບການຄັດເລືອກ ແລະ ປັດໄຈດ້ານເງື່ອນໄຂພື້ນຖານ.

3) ຜົນການສຶກສາ ພົບວ່າ: ປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ໃນວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ ມີ 6 ປັດໄຈ ໄດ້ແກ່: ປັດໄຈດ້ານການເງິນ, ປັດໄຈດ້ານສະຖາບັນການສຶກສາ, ປັດໄຈດ້ານບັນຍາກາດ - ສິ່ງແວດລ້ອມ, ປັດໄຈດ້ານການປະຊາສຳພັນ ແລະ ປັດໄຈດ້ານສັງຄົມ ມີຜົນຕໍ່ການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ໃນວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ ຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05, ສອດຄ່ອງກັບຜົນການຄົ້ນຄວ້າຂອງ Nongrayom ((2020) ໄດ້ສະຫຼຸບວ່າ ປັດໄຈທີ່ມີຜົນຕໍ່ການຕັດສິນໃຈສຶກສາຕໍ່ລະດັບປະລິນຍາຕີຂອງນັກສຶກສາຄະນະເທັກໂນໂລຊີສັງຄົມ ມະຫາວິທະຍາໄລກາລາສິນ ໄດ້ແກ່ ສາຂາວິຊາ, ຄະນະ, ຫລັກສູດ, ອາຈານ, ການຈັດການຮຽນ-ການສອນ, ຄ່າທຳນຽມ, ສະຖານທີ່ຕັ້ງ ຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05. ສອດຄ່ອງກັບຜົນການຄົ້ນຄວ້າຂອງ Wichitakul (2011) ໄດ້ສະຫຼຸບວ່າ ປັດໄຈທີ່ມີຜົນຕໍ່ການຕັດສິນໃຈເຂົ້າສຶກສາຕໍ່ຄະນະວິສະວະກຳສາດ ມະຫາວິທະຍາໄລເທັກໂນໂລຊີຣາດມົງຄົນທັນບຸລີ ປະກອບດ້ວຍດ້ານຄວາມເຊື່ອດ້ານຄ່ານິຍົມ, ດ້ານນິໄສ ແລະ ທຳນຽມ ຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05. ສອດຄ່ອງກັບຜົນການຄົ້ນຄວ້າຂອງ Laomalo (2019) ໄດ້ສະຫຼຸບວ່າ ປັດໄຈທີ່ມີຜົນຕໍ່ການຕັດສິນໃຈເຂົ້າສຶກສາຕໍ່ລະດັບປະລິນຍາຕີຂອງນັກສຶກສາມະຫາວິທະຍາໄລຂອນແກ່ນ ປະຈຳປີການສຶກສາ 2019 ແມ່ນປັດໄຈດ້ານຄວາມມີຊື່ສຽງຂອງມະຫາໄລ ແລະ ເປັນທີ່ຍອມຮັບຂອງສັງຄົມເປັນປັດໄຈທີ່ສົ່ງຜົນຫລາຍທີ່ສຸດ ຮອງລົງມາໄດ້ແກ່ປັດໄຈດ້ານສັງຄົມຍ້ອງຍໍໃນຄວາມຮູ້ຄວາມສາມາດ ເຊິ່ງພິຈາລະນາໄດ້ຈາກຄ່າສຳປະສິດທິ໌ຂອງແຕ່ລະປັດໄຈ ນອກຈາກນີ້ປັດໄຈດ້ານຄວາມມີຊື່ສຽງຂອງມະຫາວິທະຍາໄລ ແລະເປັນທີ່ຍອມຮັບຂອງສັງຄົມ ແລະ ປັດໄຈດ້ານສັງຄົມຍ້ອງຍໍໃນຄວາມຮູ້ຄວາມສາມາດມີຄວາມສຳພັນ ແລະ ສົ່ງຜົນຕໍ່ການຕັດສິນໃຈເຂົ້າຮຽນທີ່ມະຫາວິທະຍາໄລຂອນແກ່ນໃນທາງບວກ ເນື່ອງຈາກເຄື່ອງໝາຍໜ້າສຳປະສິດທິ໌ຂອງປັດໄຈທັງ 2 ເປັນປັດໄຈທາງບວກ ເຊິ່ງອາດຈະສະຫລຸບໄດ້ວ່າປັດໄຈດ້ານຄວາມມີຊື່ສຽງຂອງມະຫາວິທະຍາໄລ ແລະເປັນທີ່ຍອມຮັບຂອງສັງຄົມຈຶ່ງສົ່ງຜົນໃຫ້ນັກຮຽນນັກສຶກສາຢາກເຂົ້າມາສຶກສາໃນ

ມະຫາວິທະຍາໄລຂອນແກ່ນເພາະເປັນມະຫາວິທະຍາໄລທີ່ມີຄຸນນະພາບ ແລະເປັນມະຫາວິທະຍາໄລລຳດັບຕົ້ນໆຂອງປະເທດອີກດ້ວຍ ແລະປັດໃຈດ້ານສັງຄົມຍ້ອງຍໍໃນຄວາມຮູ້ຄວາມສາມາດກໍ່ຈະໄດ້ຮັບການຍອມຮັບຈາກສັງຄົມວ່າຖ້າໄດ້ຮຽນທີ່ມະຫາວິທະຍາໄລຂອນແກ່ນຈະເປັນຄົນທີ່ສັງຄົມຍ້ອງຍໍໃນຄວາມຮູ້, ຄວາມສາມາດ, ມີກຽດຕິຍົດຊື່ສຽງ ແລະ ສາມາດນຳວິຊາຊີບໄປຫາປະກອບອາຊີບໄດ້ງ່າຍ ສອດຄ່ອງກັບຜົນການຄົ້ນຄວ້າຂອງ Kanket (2015) ພົບວ່າ ປັດໄຈໃນການຕັດສິນໃຈສຶກສາຕໍ່ລະດັບປະລິນຍາໂທຂອງນັກສຶກສາຊັ້ນປີທີ 4 ມະຫາວິທະຍາໄລຣາຊະພັດພຣະນະຄອນ ໂດຍລວມແມ່ນຢູ່ໃນລະດັບ ຫຼາຍ ສຳລັບປັດໄຈດັ່ງຕໍ່ໄປນີ້: ດ້ານພາບລັກຂອງມະຫາວິທະຍາໄລໂດຍພາບລວມຢູ່ໃນລະດັບຫຼາຍ, ດ້ານບຸກຄະລາກອນຢູ່ໃນລະດັບຫຼາຍ ແລະ ດ້ານລັກສະນະທາງກາຍະພາບຢູ່ໃນລະດັບຫຼາຍ ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງ Sorat (2022) ທີ່ໄດ້ສຶກສາຄວາມເຫັນຕໍ່ປັດໄຈທີ່ມີຜົນຕໍ່ການຕັດສິນໃຈເລືອກເຂົ້າສຶກສາໃນລະດັບປະລິນຍາຕີ ມະຫາວິທະຍາໄລພະເຢົາ ປະຈຳປີການສຶກສາ 2022. ຜົນການສຶກສາພົບວ່າ ປັດໄຈທີ່ມີຜົນຕໍ່ການຕັດສິນໃຈຫຼາຍທີ່ສຸດຄື: ສະພາບແວດລ້ອມຮົ່ມເຢັນ ແລະ ອາກາດດີ ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງ Sukpan (2013) ທີ່ໄດ້ສຶກສາເລື່ອງປັດໄຈທີ່ມີຜົນຕໍ່ການເລືອກສຶກສາຕໍ່ໃນຫຼັກສູດປະກາດສະນີຍະບັດວິຊາຊີບຊັ້ນສູງ (ປວສ.) ຂອງນັກຮຽນ, ກຳລະນີສຶກສາວິທະຍາໄລພາ ນິດຊະຍະການທົນບູຣີ ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງ Waichalad ແລະ To-im (2016) ທີ່ໄດ້ສຶກສາປັດໄຈທີ່ມີຜົນຕໍ່ການຕັດສິນໃຈສຶກສາຕໍ່ລະດັບບັນດິດສຶກສາຂອງນັກສຶກສາລະດັບບັນດິດສຶກສາ ຄະນະສິ່ງແວດລ້ອມ ແລະ ຊັບພະຍາກອນສາດ ມະຫາວິທະຍາໄລມະຫິດົນ ຜົນການສຶກສາພົບວ່າ ສາຂາວິຊາທີ່ຮຽນໃນລະດັບປະລິນຍາຕີມີຄວາມສຳພັນກັບປັດໄຈດ້ານການປະກອບອາຊີບ ຢ່າງມີນສຳຄັນທາງສະຖິຕິທີ່ລະດັບ 0.05. ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງ Phoumiphonh (2024) ພົບວ່າ ປັດໄຈທີ່ເຮັດໃຫ້ນັກສຶກສາຕັດສິນໃຈສະໝັກຮຽນຢູ່ວິທະຍາໄລເຕັກນິກ-ວິຊາຊີບແບບປະສົມອຸດົມໄຊລວມມີ: ຫຼັກສູດທີ່ເປີດສອນແມ່ນເປັນທີ່ຕ້ອງການຂອງຕະຫຼາດແຮງງານ, ມີກິດຈະກຳເພື່ອພັດທະນາຄວາມຮູ້ຂອງນັກສຶກສາ, ຄູອາຈານມີຊື່ສຽງ ແລະ ມີຈັນຍາບັນຄູ, ຄ່າລົງທະບຽນ, ຄ່າບໍລິການ ແລະ ຄ່າຮຽນບໍ່ສູງ, ສັງຄົມຍົກຍ້ອງຄວາມຮູ້ ແລະ ຄວາມສາມາດຂອງນັກສຶກສາທີ່ສຶກສາຢູ່ບ່ອນນັ້ນ, ຕົວປ່ຽນເຫຼົ່ານີ້ມີຜົນກະທົບຕໍ່ຄວາມໜ້າຈະເປັນທີ່ນັກສຶກສາຈະເລືອກສະໝັກຮຽນຢູ່ວິທະຍາໄລເຕັກນິກ-ວິຊາຊີບແບບປະສົມອຸດົມໄຊຫຼາຍກວ່າສະຖາບັນອື່ນໆດ້ວຍລະດັບຄວາມສຳຄັນທາງສະຖິຕິທີ່ແຕກຕ່າງກັນ.

## 5. ສະຫຼຸບ

ລະດັບປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ໃນວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ ພົບວ່າ ໂດຍລວມແລ້ວ ແມ່ນຢູ່ໃນລະດັບຫຼາຍ ເຊັ່ນ: ດ້ານການເງິນ, ດ້ານສະຖາບັນການສຶກສາ, ດ້ານບຸກຄົນ, ດ້ານຫຼັກສູດ, ດ້ານບັນຍາກາດ-ສິ່ງແວດລ້ອມ ແລະ ດ້ານຄອບຄົວ. ລະດັບການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ໃນວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ ພົບວ່າ ໂດຍລວມແລ້ວ ແມ່ນມີການຕັດສິນໃຈຢູ່ໃນລະດັບຫຼາຍ. ປັດໄຈທີ່ມີຜົນຕໍ່ການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ໃນວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ ໄດ້ແກ່ປັດໄຈດ້ານການເງິນ, ປັດໄຈດ້ານສະຖາບັນການສຶກສາ, ປັດໄຈດ້ານບັນຍາກາດ ແລະ ສິ່ງແວດລ້ອມ, ປັດໄຈດ້ານການປະຊາສຳພັນ ແລະ ປັດໄຈດ້ານສັງຄົມ ມີຜົນຕໍ່ການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ໃນວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ ຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


ວິທະຍາໄລວິຈິດສິນ ພື້ນເມືອງ ຫຼວງພະບາງ. (2022). *ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງວິທະຍາໄລວິຈິດສິນພື້ນເມືອງຫຼວງພະບາງ.* ວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ.

Kanket, P. (2015). *Factors in the Decision to Pursue a Master's Degree Among Fourth-Year Students, Academic Year 2011, at Phranakhon Rajabhat University, Bang Khen District, Bangkok [Unpublished Master Thesis].* Phranakhon Rajabhat University. (Orignal language is in Thai).

Laomalo, W. (2019). *Factors Affecting the Decision of Students to Pursue a Bachelor's Degree at Khon Kaen University in the Academic Year 2019 Through the TCAS System [Unpublished Research Report].* Khon Kaen University. (Orignal language is in Thai).

Lertprapaporn, C. (2014). *Factors Affecting the Decision to Pursue a Master's Degree in Accounting [ Unpublished Master Thesis].* Thammasat University. (Orignal language is in Thai).

Maslow, A. H. (1954). Motivation and Personality. New York, NY: Harper & Row Publishers

Nongrayom, A. (2020). *The Influencing Factors for Study Decision of the Undergraduate Students at the Faculty of Social Technology Kalasin College.* Journal of Modern Learning Development, 5(3), 137–153. Retrieved from https://so06.tci-thaijo.org/index.php/jomld/article/view/242578.

Phaignavong, S. Vang, K. Lamphaiphanh, K. Phetsombath, S. & Onsengtavanh, F. (2020). A Structural Equation Model of Factors Influencing Students' Decisions in Choosing Souphanouvong University. *Souphanouvong University Journal Multidisciplinary Research and Development, 6*(2), 95–103. Retrieved from https://www.su-journal.com/index.php/su/article/view/270.

Phoumiphonh, S. (2024). Factors Influencing the Choice Decisions of Students at the Oudomxay Integrated Vocational Educational and Training College. *Souphanouvong University Journal Multidisciplinary Research and Development, 10*(2), 167–176. Retrieved from https://www.su-journal.com/index.php/su/article/view/574.

Phoyen, K. (2007). Factors *Affecting the Decision to Study for a Bachelor's Degree at Bansomdejchaopraya Rajabhat*

*University [Unpublished Master Thesis].* Chiang Mai University. (Orignal language is in Thai).

Sangsee, S. (2005). *Research Report on Learning Management of Learning Resources.* Bangkok: Phappim Limited Partnership. (Orignal language is in Thai).

Srisa-ard, B. (2002). *Introduction to Research (Revised Edition).* (7th ed). Bangkok: Sueviriyasarn. (Orignal language is in Thai).

Sorat, P. Amnuaypornlert, N. & Shiangjen, K. (2022). Opinion Levels Toward Decision Factors For Acceptance To Undergraduate Study At University Of Phayao In An Academic Year Of 2022. *Journal of Liberal Art of Rajamangala University of Technology Suvarnabhumi, 4*(3), 499–511. Retrieved from https://so03.tci-thaijo.org/index.php/art/article/view/262360.

Sriwaurai, N. (2013). *Factors Affecting the Decision-Making Process to Study for a Master of Business Administration Program [Unpublished Master Thesis].* Ubon Ratchathani University. (Orignal language is in Thai).

Sukpan, M. (2013). *Factors Affecting the Decision to Study for High Vocational Certificate: A Case Study of Thonburi Commercial Collage [ Unpublished Master Thesis].* Dhurakij Pundit University. (Orignal language is in Thai).

Taveerat, P. (1997). *Behavioral and Social Science Research Methods.* (7th ed). Bangkok: Srinakharinwirot University, Prasarnmit Campus. (Orignal language is in Thai).

Thongchuea, T. & Tummaek, P. (2017). *Guidelines for Human Resource Development in the 21st Century: An Educational Dimension.* Mahachulalongkornrajavidyalaya University. (Orignal language is in Thai).

Waichalad, U. and To-im, J. (2016). Influencing Factors for Post-Graduation Study Decision Making of Graduate Students in Faculty of Environment and Resource Studies, Mahidol University. *Journal of Graduate Studies, Valaya Alongkorn Rajabhat University Under the Royal Patronage,* 10(2), 1165–177. Retrieved from https://so02.tci-thaijo.org/index.php/JournalGradVRU/article/view/64525/52924.

Wichitakul, P. (2011). *Factors Affecting the Decision to Study at the Faculty of Engineering, Rajamangala University of Technology Thanyaburi [ Unpublished Master Thesis].* Rajamangala University of Technology Thanyaburi. (Orignal language is in Thai).

ຕາຕະລາງທີ 1. ສະແດງເຖິງຄ່າສະເລ່ຍລວມ, ຄ່າຜັນປ່ຽນມາດຕະຖານລວມ ແລະ ລະດັບປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ໃນວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ ມີ 10 ດ້ານ ດັ່ງນີ້:

| ລ/ດ | ປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ໃນວິທະຍາໄລວິຈິດສິນພື້ນເມືອງ | ຈຳນວນ (N) | ຄ່າສະເລ່ຍ ($\bar{X}$) | ຄ່າຜັນປ່ຽນມາດຕະຖານ (S.D) | ລະດັບຄວາມສຳຄັນ |
|---|---|---|---|---|---|
| 1 | ດ້ານອາຈານສອນ | 106 | 4.56 | 0.51 | ຫຼາຍທີ່ສຸດ |
| 2 | ດ້ານສັງຄົມ | 106 | 4.21 | 0.60 | ຫຼາຍທີ່ສຸດ |
| 3 | ດ້ານການເງິນ | 106 | 4.14 | 0.87 | ຫຼາຍ |
| 4 | ດ້ານສະຖາບັນການສຶກສາ | 106 | 4.12 | 0.50 | ຫຼາຍ |
| 5 | ດ້ານບຸກຄົນ | 106 | 3.80 | 0.68 | ຫຼາຍ |
| 6 | ດ້ານຫຼັກສູດ | 106 | 3.72 | 0.51 | ຫຼາຍ |
| 7 | ດ້ານບັນຍາກາດ ແລະ ສິ່ງແວດລ້ອມ | 106 | 3.68 | 0.64 | ຫຼາຍ |
| 8 | ດ້ານຄອບຄົວ | 106 | 3.65 | 0.51 | ຫຼາຍ |
| 9 | ດ້ານການປະຊາສຳພັນ | 106 | 3.32 | 0.63 | ປານກາງ |
| 10 | ດ້ານອຸປະກອນ ແລະ ສື່ການຮຽນ-ການສອນ | 106 | 3.27 | 0.63 | ປານກາງ |
| | **ລວມ** | | **3.85** | **0.34** | **ຫຼາຍ** |

ຕາຕະລາງທີ 2. ສະແດງເຖິງຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ ແລະ ລະດັບການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ໃນວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ ມີ 9 ດ້ານ ດັ່ງນີ້:

| ລ/ດ | ການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ໃນວິທະຍາໄລວິຈິດສິນພື້ນເມືອງ | ຈຳນວນ (N) | ຄ່າສະເລ່ຍ ($\bar{X}$) | ຄ່າຜັນປ່ຽນມາດຕະຖານ | ການຕັດສິນໃຈ |
|---|---|---|---|---|---|

| | | | | (S.D) | |
|---|---|---|---|---|---|
| 1 | ການຕັດສິນໃຈເລືອກຮຽນຕໍ່ເພາະວ່າເຮັດໃຫ້ຕົນເອງ ມີໂອກາດຮຽນຮູ້ ແລະ ມີຄວາມກ້າວໜ້າໃນອາຊີບ | 106 | 4.46 | 0.65 | ຫຼາຍທີ່ສຸດ |
| 2 | ການຕັດສິນໃຈເລືອກຮຽນຕໍ່ເພາະວ່າສາມາດຄວາມ ຮູ້ທີ່ໄດ້ຮຽນມາໄປປະກອບອາຊີບອິດສະຫຼະ ຫຼື ອາຊີບເສີມໄດ້ | 106 | 4.46 | 0.71 | ຫຼາຍທີ່ສຸດ |
| 3 | ການຕັດສິນໃຈເລືອກຮຽນຕໍ່ເພາະວ່າໄດ້ຄວາມຮູ້ທາງ ວິຊາການໃໝ່ໆເພີ່ມຂຶ້ນ ແລະ ສາມາດນຳໄປໃຊ້ໃນ ການປະຕິບັດງານ ຫຼື ປະກອບອາຊີບໄດ້ | 106 | 4.34 | 0.63 | ຫຼາຍທີ່ສຸດ |
| 4 | ການຕັດສິນໃຈເລືອກຮຽນຕໍ່ເພາະວ່າຫຼັກສູດທີ່ເລືອກ ຮຽນກົງກັບຄວາມສາມາດ ແລະ ຄວາມຖະໜັດຂອງ ຕົນເອງ | 106 | 4.28 | 0.74 | ຫຼາຍທີ່ສຸດ |
| 5 | ການຕັດສິນໃຈເລືອກຮຽນຕໍ່ເພາະວ່າໄດ້ຮູ້ຈັກໝູ່ ເພື່ອນຫຼາກຫຼາຍອາຊີບ, ຫຼາຍໜ່ວຍງານ ພ້ອມທັງ ໄດ້ແລກປ່ຽນຄວາມຮູ້ ແລະ ປະສົບການ ເຊິ່ງກັນ ແລະ ກັນ | 106 | 4.25 | 0.70 | ຫຼາຍທີ່ສຸດ |
| 6 | ການຕັດສິນໃຈເລືອກຮຽນຕໍ່ເພາະວ່າຄ່າໃຊ້ຈ່າຍໃນ ການສຶກສາຢູ່ໃນຂອບເຂດທີ່ຕົນເອງສາມາດເຂົ້າສຶກ ສາໄດ້ | 106 | 4.11 | 0.68 | ຫຼາຍ |
| 7 | ການຕັດສິນໃຈເລືອກຮຽນຕໍ່ເພາະວ່າເມື່ອສຳເລັດ ການສຶກສາແລ້ວສາມາດນຳວຸດທິທາງການສຶກສາໄປ ໃຊ້ໃນການເລື່ອນຊັ້ນ ແລະ ເລື່ອນເງິນເດືອນ | 106 | 4.09 | 0.83 | ຫຼາຍ |
| 8 | ການຕັດສິນໃຈເລືອກຮຽນຕໍ່ເພາະວ່າເປັນທີ່ຍອມຮັບ ຈາກສັງຄົມພາຍຫຼັງສຳເລັດການສຶກສາ | 106 | 3.87 | 0.77 | ຫຼາຍ |
| 9 | ການຕັດສິນໃຈເລືອກຮຽນຕໍ່ເພາະວ່າໄດ້ຮັບການສະ ໜັບສະໜູນ ຫຼື ທຶນການສຶກສາຈາກພາກສ່ວນທີ່ ກ່ຽວຂ້ອງ | 106 | 3.33 | 0.78 | ປານກາງ |
| | **ລວມ** | | **4.13** | **0.46** | **ຫຼາຍ** |

ຕາຕະລາງທີ 3. ສະແດງຜົນການວິເຄາະຄ່າສຳປະສິດຖົດຖອຍພະຫຸຄູນຂອງປັດໄຈທີ່ມີຜົນຕໍ່ການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ໃນວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ.

**Coefficients[a]**

| Model | Unstandardized Coefficients | | Std. Coefficients | t | Sig. |
|---|---|---|---|---|---|
| | b | Std. Error | Beta | | |
| (Constant) ຄ່າຄົງທີ່ | 0.871 | 0.384 | | 2.270 | 0.025* |
| ປັດໄຈດ້ານບຸກຄົນ ($X_1$) | 0.026 | 0.080 | 0.039 | 0.329 | $0.743^{ns}$ |
| ປັດໄຈດ້ານການເງິນ ($X_2$) | 0.008 | 0.076 | 0.014 | -0.101 | 0.020* |
| ປັດໄຈດ້ານສະຖາບັນການສຶກສາ ($X_3$) | 0.222 | 0.114 | 0.240 | 1.938 | 0.050* |
| ປັດໄຈດ້ານຫຼັກສູດ ($X_4$) | -0.185 | 0.131 | -0.204 | -1.418 | $0.159^{ns}$ |
| ປັດໄຈດ້ານອາຈານສອນ ($X_6$) | 0.064 | 0.086 | 0.070 | 0.739 | $0.462^{ns}$ |
| ປັດໄຈດ້ານບັນຍາກາດ ແລະ ສິ່ງແວດລ້ອມ ($X_7$) | 0.167 | 0.098 | 0.230 | -1.708 | 0.041* |
| ປັດໄຈດ້ານການປະຊາສຳພັນ ($X_8$) | 0.109 | 0.106 | 0.147 | 1.028 | 0.037* |
| ປັດໄຈດ້ານຄອບຄົວ ($X_9$) | -0.119 | 0.097 | -0.130 | -1.226 | $0.223^{ns}$ |
| ປັດໄຈດ້ານສັງຄົມ ($X_{10}$) | 0.227 | 0.091 | 0.293 | 2.500 | 0.014* |

R= 0.769, $R^2$= 0.591, $R^2adj$= 0.548, F Overall= 13.727, SEE= 0.31217, Sig= 0.000*

a. Dependent Variable: ການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ໃນວິທະຍາໄລວິຈິດສິນພື້ນເມືອງ

*ລະດັບຄວາມສຳຄັນທາງສະຖິຕິທີ່ລະດັບ 0.05

ns: Non signification ບໍ່ມີລະດັບຄວາມສຳຄັນທາງສະຖິຕິ